# ປະເມີນລະດັບຄວາມຄິດເຫັນໃນການປະຕິບັດຫຼັກສູດຂອງສາຍຄູວິທະຍາສາດສັງຄົມ ໃນສະຖາບການສຶກສາຄູ ສປປ ລາວ ໃນໄລຍະ COVID-19

*ອຈ.ປອ ບຸນຊູ ໄຊຍະສອນ*, ຣສ.ປອ ສີຖານ ສຸຂະວົງ, ປອ.ຄຳແພງ ບຸດມີໄຊ, ອຈ .ປອ ພິມພາ ເພຍເທບ ແລະ ປທ. ຄຳພໍ ແສງຈັນ*
*ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ*

---

***ບົດຄັດຫຍໍ້***

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ 1) ເພື່ອປະເມີນລະດັບຄວາມຄິດເຫັນຕໍ່ກັບສະພາບໃນການປະຕິບັດຫຼັກສູດ, 2) ເພື່ອປະເມີນລະດັບຄວາມຄິດເຫັນຕໍ່ກັບບັນຫາທີ່ເກີດຂຶ້ນໃນການປະຕິບັດຫຼັກສູດ ແລະ 3) ຄວາມຄິດເຫັນຕໍ່ກັບຄວາມເປັນໄປໄດ້ ແລະ ແນວທາງໃນການພັດທະນາຫຼັກສູດ ແລະ ການຈັດການຮຽນ-ການສອນຢູ່ຫ້ອງຮຽນ ແລະ ການສອນແບບອອນລາຍໃຫ້ຄຽງຄູ່ກັນໄປຂອງສາຍຄູວິທະຍາສາດສັງຄົມໃນສະຖາບການສຶກສາຄູ ສປປ ລາວ ໃນອານາຄົດ. ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າທັງໝົດຈຳນວນ 179 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນແບບສຳພາດ ແລະ ແບບສອບຖາມ. ການວິເຄາະຂໍ້ມູນຄຸນນະພາບແມ່ນວິເຄາະແບບລຽງຄວາມ ແລະ ຈັດໝວດໝູ່ຄຳເວົ້າສ່ວນຂໍ້ມູນປະລິມານແມ່ນຊອກຫາຄ່າສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ຜົນການຄົ້ນຄວ້າພົບວ່າ: 1) ສະພາບໃນການຈັດການຮຽນ- ການສອນ ແມ່ນໄດ້ປະຕິບັດຕິບັດຕາມຫຼັກສູດ ຂອງກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດໃຫ້. ໃນໄລຍະພະຍາດ COVID-19 ກໍໄດ້ມີການປັບປ່ຽນການສອນມາເປັນແບບອອນ (Online) ຕາມຂະບວນການ. ການວິໄຈຍັງພົບຫຼາຍບັນຫາໃນການຈັດການຮຽນ-ການສອນຊ່ວງໄລຍະເວລາດັ່ງກ່ານ ອັນເປັນສິ່ງກີດຂວາງຄຸນະພາບການຮຽນການສອນ. ດັ່ງນັ້ນ, ການປັບປຸງຫຼັກສູດໃຫ້ໄປເປັນຫຼັກສູດຮຽນທາງໄກຈິ່ງເປັນທາງເລືອກໜຶ່ງທີ່ສຳຄັນ. ການປັບເນື້ອໃນບົດຮຽນໃຫ້ກະທັດຮັດ ແລະ ເຂົ້າໃຈງ່າຍ, ສ້າງຮູບພາບປະກອບ ແລະ ຕັດຕໍ່ວິດີໂອປະກອບການຮຽນການສອນ ອາດເຮັດໃຫ້ຜູ້ຮຽນສົນໃຈຫຼາຍຂຶ້ນ. ຜົນການຄົ້ນຄວ້າຍັງແນະນຳໃຫ້ຄູຜູ້ສອນເອົາໃຈໃສ່ການແຕ່ງກາຍຂອງນັກສຶກສາ ແລະ ຄວາມເອົາໃຈໃສ່ໃນການຮຽນຂອງຜູ້ຮຽນ.

***ຄຳສັບສຳຄັນ:*** *ການລະບາດ COVID-19, ການຈັດການຮຽນການສອນ, ການບໍລິຫານຫຼັກສູດ, ບັນຫາການຮຽນການສອນ*

---

** ຕິດຕໍ່ພົວພັນ. ອຈ.ປອ ບຸນຊູ ໄຊຍະສອນ; ໂທ. 02055028899; Email: bounsou@nuol.edu.la*

# Assessment of Perspectives on Social Sciences Curriculum Implementation in Teacher Education Institutions During COVID-19 Pandemic, Lao PDR

*Bounsou Xayasone*, Sithane Soukhavong, Khampheng Boudmexay, Phimpha Phiathep and Khamphor Sengchanh*
*Faculty of Education, The National University of Laos*

## Abstract

The objectives of the study were to: (1) assess perspectives on curriculum implementation, (2) evaluate perceptions of emerging problems related to curriculum implementation, and (3) explore views on the feasibility and guidelines for curriculum implementation in social sciences, as well as the management of teaching and learning, including online classes, in Teacher Education Institutions in Lao PDR. The target group consisted of 179 participants, including administrators, teachers, and student teachers. The research tools included a questionnaire, which was used to analyze percentages, means, and standard deviations, and an interview, which applied content analysis. The results revealed that teaching and learning management was based on the curriculum for Teacher Education established by the Ministry of Education and Sports (MoES). Due to the COVID-19 pandemic, teaching and learning were shifted to an online format, and teachers adapted to the “new normal” mode. The study also identified several challenges faced by student teachers during this period, which hindered the improvement of teaching and learning quality. Therefore, enhancing the curriculum with a stronger focus on online learning is crucial. Improving lesson content to be clearer and easier to understand, including the use of photos and videos, is necessary. The study also suggested that teachers should pay attention to students' physical presence, engagement, and participation during teaching and learning activities.

***Keywords**: COVID-19 pandemic, Teaching-learning management, Curriculum management, Teaching learning issue*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສໍາຄັນຂອງບັນຫາ*

ຄູທຸກຊັ້ນຮຽນ, ທຸກສາຂາວິຊາຈຶ່ງຕັ້ງໜ້າຄົ້ນຄວ້າປັບປຸງ, ປ່ຽນແປງວິທີການຈັດການຮຽນ -ການສອນໃຫ້ກັບນັກສຶກສາຄົນໃໝ່ ແນໃສ່ບັນລຸເປົ້າໝາຍດ້ານຄຸນນະພາບຂອງການສຶກສາ ເພາະໝາກຫົວໃຈຂອງຄຸນນະພາບການສຶກສາແມ່ນຜູ້ຮຽນຕ້ອງມີລະດັບຄວາມຮູ້ ແລະ ຄວາມສາມາດຢ່າງແທ້ຈິງຕາມທີ່ບັນຈຸໄວ້ໃນຫລັກສູດ ຂອງແຕ່ລະຊັ້ນແຕ່ລະສາຍວິຊາພ້ອມກັນນັ້ນຍັງຕ້ອງພຽບພ້ອມໄປດ້ວຍຄຸນສົມບັດສິນທໍາປະຕິວັດ. ຄຸນນະພາບຂອງການສຶກສາເກີດມາຈາກຫຼາຍປັດໃຈແຕ່ປັດໃຈສໍາຄັນຕົ້ນຕໍແມ່ນຄູສິດສອນໃຫ້ນັກສຶກສາໄດ້3ລັກຊະນະ ແລະ 5 ຫຼັກມູນການສຶກສາ. ຮຽກຮ້ອງເຖິງການຈັດຕັ້ງທຸກພາກສ່ວນທັງພາກລັດ ແລະ ພາກເອກຊົນ, ອົງການຈັດຕັ້ງສາກົນນັບທັງສ່ວນບຸກຄົນໃນທົ່ວສັງຄົມຈົ່ງສືບຕໍ່ໃຫ້ທຶນການສະໜັບສະໜູນຊ່ວຍເຫຼືອເບິ່ງແຍງທາງດ້ານຊີວິດການເປັນຢູ່ຂອງຄູໃຫ້ດີຂຶ້ນ, ຂໍໃຫ້ປະກອບສ່ວນທາງດ້ານທຶນຮອນ, ຊັບສິນ ແລະ ສະຕິປັນຍາຂອງຕົນເຂົ້າໃນການພັດທະນາການສຶກສາ, ຖືເອົາການສຶກສາເປັນໜ້າທີ່ຂອງໝົດທຸກຄົນແລະພ້ອມກັນພັດທະນາການສຶກສາໃຫ້ມີຄຸນນະພາບນັບມື້ນັບສູງຂຶ້ນ (ບົດຄໍາເຫັນຂອງທ່ານດຣ. ພັນຄໍາວິພາວັນກ່າວເນື່ອງໃນໂອກາດວັນຄູແຫ່ງຊາດໃນວັນທີ 7 ຕຸລາ 2018).

ພັກ ແລະ ລັດຖະບານແຫ່ງ ສປປ ລາວ ເຫັນວ່າການສຶກສາເປັນເຄື່ອງມືທີ່ສໍາຄັນໃນການພັດທະນາຊັບພະຍາກອນມະນຸດແລະພັດທະນາເສດຖະກິດແຫ່ງຊາດ ເພື່ອປະຕິບັດພາລະກິດດັ່ງກ່າວໃຫ້ມີປະສິດທິພາບສູງກ່ອນອື່ນການສຶກສາຈະຕ້ອງໄດ້ຮັບການພັດທະນາໄປກ່ອນບາດກ້າວໜຶ່ງນະໂຍບາຍຂອງພັກໃນການພັດທະນາການສຶກສາໃນປີ 2020-2025 ແມ່ນຫັນໃສ່ການປັບປຸງຄຸນນະພາບເປັນຕົ້ນຕໍ ເພື່ອແນໃສ່ການປັບປຸງຄຸນນະພາບການສຶກສາແຫ່ງຊາດໃຫ້ຫຍັບເຂົ້າໃກ້ກັບມາດຕະຖານສາກົນຢ່າງວ່ອງໄວເພື່ອເຮັດໃຫ້ແນວທາງໃນການສຶກສາຂອງພັກແລະຈຸດມຸ້ງໝາຍລວມຂອງການສຶກສາໄດ້ຮັບການປະຕິບັດໃຫ້ປະກົດຜົນເປັນຈິງນັ້ນໜ້າທີ່ອັນສໍາຄັນອັນໜຶ່ງຂອງກະຊວງສຶກສາທິການ-ກິລາໃນປັດຈຸບັນຕ້ອງດໍາເນີນການພັດທະນາການສຶກສາໃນນັ້ນການພັດທະນາຫຼັກສູດ ,ການພັດທະນາການຮຽນ-ການສອນໃຫ້ທັນກັບສະພາບການປ່ຽນແປງຂອງສັງຄົມໃນປະຈຸບັນແລະອານາຄົດແລະການພັດທະນາຄູສອນກໍ່ເປັນບັນຫາໜຶ່ງທີ່ສໍາຄັນແລະຮີບດ່ວນກວ່າໝູ່ຍ້ອນວ່າຄູທີ່ພຽບພ້ອມໄປດ້ວຍຄວາມຮູ້, ຄວາມສາມາດນັ້ນແມ່ນປັດໃຈໜຶ່ງທີ່ສໍາຄັນແລະເປັນຂໍກຸນແຈທີ່ຈະນໍາໄປສູ່ຜົນສໍາເລັດໃນການປະຕິບັດແຜນນະໂຍບາຍຂອງແນວທາງການສຶກສາໃໝ່ຂອງປະເທດເຮົາ (ແຜນພັດທະນາການສຶກສາຂອງກະຊວງສຶກສາທິການ-ກິລາແຕ່ປີ 2020-2025, ໜ້າ.16).

ເລີ່ມແຕ່ເດືອນທັນວາ ປີ 2019 ຈົນເຖິງປະຈຸບັນໄດ້ເກີດມີພະຍາດ COVID-19 ລະບາດໄປທົ່ວໂລກໃນນັ້ນຢູ່ ສປປ ລາວ ກໍ່ພົບບັນຫາພະຍາດລະບາດເຊັ່ນດຽວກັນເຮັດໃຫ້ເກີດບັນຫາວິກິດຫຼາຍໆດ້ານເຊັ່ນ: ດ້ານເສດຖະກິດ, ສັງຄົມ, ການທ່ອງທ່ຽວ, ການຂົນສົ່ງສິນຄ້າ, ການສຶກສາ ແລະ ອື່ນໆ. ໃນນັ້ນການສຶກສາກໍໄດ້ຢຸດຕິການຮຽນ-ການສອນໄປໄລຍະໜຶ່ງຫຼັງຈາກນັ້ນກໍໄດ້ປັບປຸງການຮຽນ-ການສອນມາເປັນການສອນແບບອອນລາຍ. ມາຮອດວັນທີ 19 ເດືອນເມສາ 2021 ກໍໄດ້ແຈ້ງການເປັນໄລຍະແກ່ຍາວມາຈົນຮອດ ວັນທີ 4 ມິຖຸນາ 2021 ສຳນັກງານນາຍົກລັດທະມົນຕີໄດ້ປະກາດໃຫ້ປະຊາຊົນລາວບໍ່ໃຫ້ມີການເຕົ້າໂຮມກັນຈຳນວນຫຼາຍ, ຜັດປ່ຽນກັນໄປປະຈຳການ ແລະ ໃຫ້ຢູ່ແຕ່ເຮືອນອະນຸຍາດອອກໄປຊື້ໄດ້ພຽງແຕ່ສະບຽງອາຫານ ແລະ ເຄື່ອງໃຊ້ທີ່ຈຳເປັນເພາະພົບຄົນຕິດພະຍາດ COVID-19 ເພີ່ມຂຶ້ນເປັນຈຳນວນຫຼວງຫຼາຍກວ່າເກົ່າເປັນຮອບທີ2 ແລະໄດ້ເຮັດໃຫ້ມີຜົນກະທົບທຸກໆດ້ານລວມໄປເຖິງດ້ານການສຶກສາໄດ້ຢຸດຕິການຮຽນ-ການສອນສົ່ງຜົນໃຫ້ການສຶກສາບໍ່ຈົບຕາມຫຼັກສູດ

ຈາກເຫດຜົນດັ່ງກ່າວພວກເຮົາຈຶ່ງມີຄວາມສົນໃຈເປັນເອກພາບກັນພາຍໃນທີມນັກຄົ້ນຄວ້າວິທະຍາສາດ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ ຈຶ່ງໄດ້ສະເໜີປະເມີນລະດັບຄວາມຄິດເຫັນໃນການປະຕິບັດຫຼັກສູດຂອງສາຍຄູວິທະຍາສາດສັງຄົມໃນສະຖານການສຶກສາຄູ ສປປ ລາວ ໃນໄລຍະ COVID-19.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ລະດັບຄວາມຄິດເຫັນຕໍ່ກັບສະພາບໃນການປະຕິບັດຫຼັກສູດ ເປັນຄືແນວໃດ?

2. ຄວາມຄິດເຫັນຕໍ່ກັບບັນຫາທີ່ເກີດຂຶ້ນໃນການປະຕິບັດຫຼັກສູດ ຢູ່ໃນລະດັບໃດ?

3. ຄວາມຄິດເຫັນຕໍ່ແນວທາງໃນການພັດທະນາຫຼັກສູດ ແລະການຈັດການຮຽນ-ການສອນຢູ່ຫ້ອງຮຽນແລະການສອນແບບອອນລາຍໃຫ້ຄຽງຄູ່ກັນໄປຂອງສາຍຄູວິທະຍາສາດສັງຄົມໃນສະຖານການສຶກສາຄູ ສປປ ລາວ ໃນອານາຄົດ.ມີຄືແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອປະເມີນລະດັບຄວາມຄິດເຫັນຕໍ່ກັບສະພາບໃນການປະຕິບັດຫຼັກສູດ

2. ເພື່ອປະເມີນລະດັບຄວາມຄິດເຫັນຕໍ່ກັບບັນຫາທີ່ເກີດຂຶ້ນໃນການປະຕິບັດຫຼັກສູດ.

3. ເພື່ອຫາແນວທາງໃນການພັດທະນາຫຼັກສູດ ແລະ ການຈັດການຮຽນ-ການສອນຢູ່ຫ້ອງຮຽນ ແລະ ການສອນແບບອອນລາຍໃຫ້ຄຽງຄູ່ກັນໄປຂອງສາຍຄູວິທະຍາສາດສັງຄົມໃນສະຖານການສຶກສາຄູ ສປປ ລາວ ໃນອານາຄົດ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ມີຫຼາຍຄົນໄດ້ມີການເຮັດບົດຄົ້ນຄວ້າວິທະຍາສາດກ່ຽວກັບການຮຽນ-ການສອນ ໄລຍະພະຍາດ COVID-19 ລະບາດເຊັ່ນ:

ເຕີ້ຍ ວິງດາລາ (2021) ໄດ້ເຮັດການຄົ້ນຄວ້າການສຳຫຼວດຄວາມພ້ອມຂອງຄູ-ອາຈານ ຕໍ່ກັບການຈັດການຮຽນ-ການສອນອອນລາຍ ໃນວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ ໂດຍມີຈຸດປະສົງ ເພື່ອສຳຫຼວດຄວາມພ້ອມ ແລະ ຄວາມຕ້ອງການສິ່ງສະໜັບສະໜູນຂອງຄູໃນການສົ່ງເສີມຂະບວນດ້ານຈັດການຮຽນ-ການສອນອອນລາຍໃຫ້ມີປະສິດທິພາບ ເຊິ່ງຜົນການສຳຫຼວດ ພົບວ່າ: ຄູ-ອາຈານສ່ວນຫຼາຍໄດ້ຈັດການຮຽນ-ການສອນທັງຜ່ານລະບົບອອນລາຍ ແລະ ສອນໃນຫ້ອງຮຽນປົກກະຕິຄວບຄູ່ກັນມີເຖິງ 69.2% ແຕ່ສ່ວນຫຼາຍຈັດການສອນອອນລາຍແມ່ນຜ່ານຊ່ອງທາງ WhatsApp ກວມເອົາເຖິງ 89.2%, ຄູສອນມີຄວາມພ້ອມໃນການຈັດການຮຽນ-ການສອນອອນລາຍ 70.8%. ຄູມີຄວາມເຫັນວ່າ ການສອນອອນລາຍຊ່ວຍເສີມທັກສະການຮຽນຮູ້ດ້ວຍຕົນເອງ 86.2%, ມີຄວາມສາມາດເຂົ້າເຖິງແຫຼ່ງການຮຽນຮູ້ 67.7%, ເປັນການເພີ່ມໂອກາດໃນການເຂົ້າເຖິງຂໍ້ມູນໄດ້ຈາກອຸປະກອນຕ່າງໆຜ່ານທາງລະບົບເຄືອຂ່າຍອິນເຕີເນັດ 78.5%, ເປັນການເພີ່ມຊ່ອງທາງໃນການຮຽນທີ່ທັນສະ ໄໝ ແລະ ຮຽນຮູ້ຕະຫຼອດເວລາ 83.1%, ຄູມີຄວາມເຫັນວ່າ ຄວນມີການພັດທະນາການຮຽນ-ການສອນຜ່ານລະບົບອອນລາຍ 66.2%, ຄູສອນມີຄວາມຕ້ອງການຝຶກອົບຮົມສຳລັບຊຸດການຈັດການຮຽນ-ການສອນອອນລາຍ ມີເຖິງ 87.7% ແລະ ຄູມີຄວາມພໍໃຈໃນພາບລວມຕໍ່ການຈັດການຮຽນ-ການສອນອອນລາຍ 66.2%;

ຄຳໄມ ສີວິງໄຊ (2021) ໄດ້ຄົ້ນຄວ້າເລື່ອງ "ຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ຕໍ່ກັບການຈັດການຮຽນ-ການສອນຂອງຄູສອນໃນ ວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ" ໂດຍມີຈຸດປະສົງ 1) ເພື່ອສຶກສາຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ຕໍ່ກັບການຈັດການຮຽນ-ການສອນຂອງຄູສອນ ໃນວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ, 2) ເພື່ອສຶກສາວິທີການໃນການຈັດຕັ້ງປະຕິບັດການຈັດການຮຽນ-ການສອນຂອງຄູສອນ ໃນວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ ໃນຊ່ວງໄລຍະການແຜ່ລະບາດຂອງພະຍາດໂຄວິດ-19. ກຸ່ມເປົ້າໝາຍໃນການສຶກສາຄົ້ນຄວ້າແມ່ນຄູສອນ ຈຳນວນ 75 ຄົນ, ຍິງ 46 ຄົນ. ໂດຍເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນ ແບບສອບຖາມ ແລະ ຄຳຖາມສົນທະນາກຸ່ມ. ສຳລັບສະຖິຕິທີ່ນຳໃຊ້ເຂົ້າໃນການວິເຄາະຂໍ້ມູນ ໄດ້ແກ່: ຄ່າຄວາມຖີ່ (Fréquence), ຄ່າສ່ວນຮ້ອຍ (%), ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ (S.D.) ແລະ ການພັນລະນາແບບຮຽງຄວາມ ເຊິ່ງຜົນຂອງການຄົ້ນຄວ້າ ພົບວ່າ:

1) ຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ຕໍ່ກັບການຈັດການຮຽນ-ການສອນຂອງຄູສອນ ໃນ 3 ດ້ານຄື: ການກະກຽມວາງແຜນການສອນ, ການຈັດຕັ້ງປະຕິບັດການສອນ ແລະ ການວັດ-ປະເມີນຜົນການສອນ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ;

2) ວິທີການຈັດຕັ້ງປະຕິບັດການຮຽນ-ການສອນ ໃນໄລຍະທີ່ມີການແຜ່ລະບາດພະຍາດໂຄວິດ-19 ເຫັນວ່າລະບົບເອເລັກໂຕຼນິກທີ່ຄູສອນນໍາໃຊ້ເຂົ້າໃນການຈັດການຮຽນ-ການສອນແມ່ນໂປຼແກຣມ Google meet ຖືກນໍາໃຊ້ຫຼາຍກວ່າໝູ່ ໂດຍມີການນໍາສະເໜີເນື້ອໃນບົດຮຽນຜ່ານຮູບແບບ Power point, ຮູບແບບວິທີການສອນແມ່ນສອນແບບບັນລະຍາຍ, ສໍາລັບກິດຈະກໍາການຮຽນ-ການສອນ ທີ່ນໍາໃຊ້ຫຼາຍກວ່າໝູ່ແມ່ນ ກິດຈະກໍາສົນທະນາຖາມ-ຕອບ ໂດຍນໍາສະເໜີສື່ການຮຽນ-ການສອນຜ່ານ Power point, ສໍາລັບວິທີການວັດ ແລະ ປະເມີນຜົນທີ່ນໍາໃຊ້ຫຼາຍທີ່ສຸດແມ່ນແບບໃຊ້ຄໍາຖາມ;

3) ການສົນທະນາກຸ່ມ ພົບວ່າ: ຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19 ຕໍ່ກັບການສຶກສາໃນວິທະຍາໄລຄູດົງຄໍາຊ້າງມີ 3 ດ້ານໃຫຍ່ ຄື: 1) ການສອນຂອງຄູສອນ: ຮູບແບບການສອນແມ່ນປ່ຽນຈາກການສອນແບບເຊິ່ງໜ້າມາເປັນການສອນທາງໄກແບບອອນລາຍ ແລະ ເວັ້ນໄລຍະຫ່າງ, ຄູສອນຕ້ອງໄດ້ອອກແບບແຜນການສອນ, ບົດສອນ, ຮູບແບບການວັດ-ປະເມີນຄືນໃໝ່ ເພື່ອໃຫ້ສອດຄ່ອງ ແລະ ແທດເໝາະກັບສະພາບການຈັດການຮຽນ-ການສອນຕົວຈິງ. ການຈັດຕັ້ງປະຕິບັດຫຼັກສູດສ້າງຄູແມ່ນບໍ່ເປັນໄປຕາມຮູບແບບທີ່ຫຼັກສູດໄດ້ກໍານົດໄວ້ ເພາະບາງລາຍວິຊາແມ່ນບໍ່ສາມາດຈັດຕັ້ງປະຕິບັດໄດ້ເລີຍ ເຊັ່ນວ່າ: ວິຊາປະສົບການ, ຝຶກຫັດວິຊາຊີບຄູ ແລະ ໃນລາຍວິຊາທີ່ມີກິດຈະກໍາການທົດລອງ ກໍແມ່ນບໍ່ສາມາດນໍາພານັກສຶກສາປະຕິບັດໄດ້; 2) ດ້ານການຮຽນຂອງນັກສຶກສາ: ນັກຮຽນບໍ່ສາມາດເຂົ້າຮ່ວມຮຽນໄດ້ເຕັມເມັດເຕັມໜ່ວຍ, ບໍ່ໄດ້ລົງຝຶກປະສົບການການສອນ, 3) ການບໍລິຫານຂອງວິທະຍາໄລຄູ: ຈັດຕາຕະລາງຜັດປ່ຽນກັນມາປະຈໍາການ, ສະພາບແວດລ້ອມພາຍໃນວິທະຍາໄລຊຸດໂຊມ ເພາະຂາດການທໍາຄວາມສະອາດຢ່າງຕໍ່ເນື່ອງ, ງົບປະມານໃນການຈັດການບໍລິຫານຕ່າງໆແມ່ນບໍ່ພຽງພໍ, ການເປີດຮັບສະໝັກນັກສຶກສາໃໝ່ບໍ່ໄດ້ຕາມແຜນ, ການລົງທະບຽນເຂົ້າຮຽນແມ່ນມີຄວາມລ່າຊ້າ.

ຊະວິດ ລາຫຸນ (2551) ໄດ້ຄົ້ນຄວ້າເລື່ອງ "ການສຶກສາກິດຈະກໍາສິລະປະໃນລະບົບອອນລາຍ ທີ່ສົ່ງເສີມ ຈາລິຍະທໍາວິຊາການຂອງນັກສຶກສາລະດັບປະລິນຍາຕີ ໃນກຸງເທບມະຫານະຄອນ" ໂດຍມີຈຸດປະສົງ 1) ເພື່ອສຶກສາກິດຈະກໍາສິລະປະໃນລະບົບອອນລາຍ ທີ່ສົ່ງເສີມຈາລິຍະທໍາວິຊາການ ຂອງນັກສຶກສາລະດັບປະລິນຍາຕີ, 2) ເພື່ອເປັນການນໍາສະເໜີແນວທາງການປ້ອງກັນ ແລະ ແກ້ໄຂບັນຫາຈາລິຍະທໍາວິຊາການໃນການຮຽນ-ການສອນອອນລາຍ. ໂດຍມີກຸ່ມຕົວຢ່າງເປັນຜູ້ຊ່ຽວຊານທີ່ຈັດກິດຈະກໍາສິລະປະໃນລະບົບອອນລາຍໃນລະດັບປະລິນຍາຕີ ຈໍານວນ 17 ຄົນ. ເຄື່ອງມືທີ່ໃຊ້ເປັນແບບສອບຖາມປາຍເປີດ ແລະປາຍປິດ ຜູ້ຊ່ຽວຊານຈະຕອບແບບສອບຖາມ 3 ຮອບ ໂດຍຮອບທີ 1 ເປັນການສອບຖາມສະພາບທົ່ວໄປ ເພື່ອນໍາຄໍາຕອບທີ່ໄດ້ມາສ້າງແບບສອບຖາມຮອບທີ 2 ເຊິ່ງເປັນແບບສອບຖາມປາຍປິດ ປະມານຄ່າ 5 ລະດັບ ສ່ວນແບບສອບຖາມຮອບທີ 3 ມີຄໍາຖາມຄືກັບແບບສອບຖາມໃນຮອບທີ 2 ແຕ່ເພີ່ມຄ່າມັດຖະຍະຖານ ແລະ ຄ່າພິໄສ ລະຫວ່າງຄໍຣທາຍ (Quartile) ທີ່ຄໍານວນໄດ້ຈາກຄໍາຕອບຂອງກຸ່ມຜູ້ຊ່ຽວຊານໃນຮອບທີ 2 ພ້ອມທັງສະແດງຕໍາແໜ່ງຄໍາຕອບຂອງຜູ້ຊ່ຽວຊານແຕ່ລະຄົນ ເພື່ອໃຫ້ເຫັນວ່າຄໍາຕອບຂອງກຸ່ມມີຄວາມສອດຄ່ອງກັນແນວໃດ ເຊິ່ງຜູ້ຊ່ຽວຊານອາດແກ້ໄຂ ຫຼື ຢືນຢັນຄໍາຕອບເກົ່າໄດ້.

ຜົນຂອງການຄົ້ນຄວ້າ ພົບວ່າ: ບັນຫາຈາລິຍະທໍາວິຊາການທີ່ພົບ ຄື: ການລົງທະບຽນແທນກັນ, ການເຮັດກິດຈະກໍາອື່ນລະຫວ່າງຮຽນ, ການບໍ່ສຶກສາເນື້ອໃນໃນລະບົບອອນລາຍ, ການເຮັດແບບຝຶກຫັດ ແລະ ງານແທນກັນ, ການຈົດກ່າຍຜົນງານຜູ້ອື່ນ ແລະ ການບໍ່ສົ່ງງານຕາມກໍານົດ. ກິດຈະກໍາສິລະປະປະຕິບັດທີ່ສົ່ງເສີມ ແລະ ແກ້ໄຂບັນຫາຈາລິຍະທໍາວິຊາການ ໄດ້ແກ່: ຄວນມີການຊີ້ແຈງຂໍ້ຕົກລົງ ແລະ ບົດລົງໂທດທີ່ຊັດເຈນ, ຄວນມີແບບທົດສອບແບບວິເຄາະກ່ອນ ແລະ ຫຼັງຮຽນ ເພື່ອປຽບທຽບແນວຄວາມຄິດຂອງຜູ້ຮຽນ, ການສັ່ງງານປະຕິບັດໃຫ້ມີໂຈດທີ່ຫຼາກຫຼາຍ ຈະເຮັດໃຫ້ຜູ້ຮຽນຈົດກ່າຍ ຫຼື ກ໊ອບຜົນງານຍາກຂຶ້ນ ແລະ ຄວນກໍານົດໃຫ້ຜູ້ຮຽນສົ່ງແບບຮ່າງ (Sketch) ກ່ອນເຮັດຜົນງານຕົວຈິງເພື່ອການກວດສອບ. ນອກຈາກນີ້, ຄວນມີກິດຈະກໍາທີ່ກະຕຸ້ນໃຫ້ຜູ້ຮຽນເອົາໃຈໃສ່ໃນການຮຽນ ເຊັ່ນ: ມີຄະແນນສໍາລັບຜູ້ເຂົ້າຮຽນນອກເວລາ, ມີການເກັບຄະແນນທ້າຍຄາບ ແລະ ຄະແນນການເຂົ້າຮ່ວມປະຊຸມອອນລາຍ ເປັນຕົ້ນ. ສໍາລັບການສົ່ງຜົນງານນັ້ນຄວນໃຊ້ໄປສະນີເອເລັກໂຕຼນິກ ຫຼື ສົ່ງຜ່ານລະບົບຈັດການຮຽນຮູ້ ໄດ້ແກ່: ກະດານສົນທະນາ ແລະ ກ່ອງເອກະສານເອເລັກໂຕຼນິກ ເພາະສາມາດກວດສອບວັນທີ່ ແລະ ເວລາທີ່ສົ່ງໄດ້.

ຈາກການສຶກສາງານຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງດັ່ງກ່າວ ເຮັດໃຫ້ຮູ້ວ່າສະຖານການສຶກສາແຕ່ລະແຫ່ງ ແມ່ນໄດ້ມີການປັບຕົວ ຫຼື ມີການປ່ຽນແປງເພື່ອການຮັບມື, ເພື່ອພັດທະນາການຈັດການຮຽນ-ການສອນໃນລະບົບອອນລາຍຢູ່ສະເໝີ ບໍ່ວ່າຢູ່ໃນສະຖານະການປົກກະຕິ ຫຼື ສະຖານະການວິກິດກໍຕາມ ແຕ່ກໍພ້ອມປັບຕົວເພື່ອໃຫ້ທັນຕໍ່ສະພາບການຢູ່ສະເໝີ. ແຕ່ສິ່ງທີ່ຈະຕ້ອງໃຫ້ຄວາມສໍາຄັນຕໍ່ກັບການຈັດການຮຽນ-ການສອນໃນລະບົບອອນລາຍ ກໍຄືສະພາບແວດລ້ອມພາຍໃນຂອງສະຖານການສຶກສາ ແລະ ສະພາບແວດລ້ອມຂອງຜູ້ຮຽນຕ້ອງເອື້ອອໍານວຍ ເປັນຕົ້ນແມ່ນຕ້ອງມີອຸປະກອນເຄື່ອງມືເອເລັກໂຕຼນິກທີ່ທັນສະໄໝ ທີ່ເອື້ອຕໍ່ສະພາບການຈັດກິດຈະກໍາການຮຽນ-ການສອນ, ລະບົບເຄືອຂ່າຍສັນຍານອິນເຕີເນັດທີ່ດີ, ການຈັດລະດັບຄວາມສໍາ

ຄົນຂອງຜູ້ບໍລິຫານຕໍ່ການຈັດການຮຽນ-ການສອນແບບອອນລາຍ , ຈັດຝຶກອົບຮົມວິທີສອນ, ການຈັດຫ້ອງຮຽນສະເພາະ, ຄວາມພ້ອມຂອງຄູສອນ ແລະ ຜູ້ຮຽນ, ຮູບແບບຂອງການຈັດການຮຽນ-ການສອນທັງພາກທິດສະດີ ແລະ ການປະຕິບັດຕົວຈິງແບບໃໝ່, ດ້ານເອກະສານ, ດ້ານສື່, ແລະ ອຸປະກອນ, ໂປຼແກຣມທີ່ໃຊ້ໃນການຮຽນ-ການສອນ, ດ້ານຈັນຍາບັນ (ກໍານົດລະບຽບການເຂົ້າຮຽນ, ການສົ່ງບົດຮຽນ) ແລະ ການປະເມີນຜົນການຮຽນ-ການສອນກ່ອນ ແລະ ຫຼັງສອນທຸກຄັ້ງ.

## 3. ວິທີດຳເນີນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ເປັນແບບປະສົມ ເຊິ່ງລວມທັງດ້ານປະລິມານ(ນໍາໃຊ້ແບບສອບຖາມ) ແລະ ຄຸນນະພາບ (ນໍາໃຊ້ການສໍາພາດ)ເພື່ອປະເມີນລະດັບຄວາມຄິດເຫັນຕໍ່ກັບສະພາບ ແລະ ບັນຫາທີ່ເກີດຂຶ້ນ ໃນການປະຕິບັດຫຼັກສູດຂອງສາຍຄູວິທະຍາສາດສັງຄົມໃນສະຖາບັນການສຶກສາຄູສປປລາວໃນໄລຍະ COVID-19ແລະເພື່ອຫາແນວທາງໃນການພັດທະນາຫຼັກສູດແລະການຈັດການຮຽນ-ການສອນຢູ່ຫ້ອງຮຽນແລະການສອນແບບອອນລາຍໃຫ້ຄຽງຄູ່ກັນໄປຂອງສາຍຄູວິທະຍາສາດສັງຄົມໃນສະຖາບັນການສຶກສາຄູສປປລາວ.

*3.1 ຂໍ້ມູນພື້ນຖານຂອງກຸ່ມເປົ້າໝາຍ*

ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າທັງໝົດຈໍານວນ 179 ຄົນເຊິ່ງປະກອບດ້ວຍຜູ້ບໍລິຫານ 25ຄົນ, ອາຈານສອນ17 ຄົນ ແລະ ນັກສຶກສາປີ 3-4 ຈໍານວນ137ຄົນ. ໃນນີ້ແມ່ນຄະນະຜູ້ບໍລິຫານ, ຄູທີ່ສອນສາຂາຄູວິທະຍາສາດສັງຄົມ ແລະ ນັກສຶກສາຄູວິທະຍາສາດສັງຄົມປີ 3-4 ທີ່ຢູ່ໃນສະຖາບັນການສຶກສາຄູ 4 ແຫ່ງ. ຄູ ແລະ ນັກສຶກສາຈໍານວນໜຶ່ງທີ່ບຸນຈຸຢູ່ພາກຄູວິທະຍາສາດສັງຄົມແມ່ນໄດ້ເອົາເປັນກຸ່ມທົດລອງເຄື່ອງມືດັ່ງມີລາຍລະອຽດຕໍ່ໄປນີ້:

ຕາຕະລາງ 1: ຈໍານວນກຸ່ມເປົ້າໝາຍສໍາລັບການຄົ້ນຄວ້າ

| ລ/ດ | ສະຖາບັນການສຶກສາຄູ | ຜູ້ບໍລິຫານ | ຄູສອນ | ນັກສຶກສາ ປີ 3-4 | ລວມ |
|---|---|---|---|---|---|
| 1 | ຄະນະສຶກສາສາດ (ມສ) | 5 | 2 | 57 | 54 |
| 2 | ຄະນະສຶກສາສາດແລະຄະນະນໍາ(ມຊ) | 7+1 | 3 | 19 | 30 |
| 3 | ຄະນະສຶກສາສາດ(ມຂ) | 6 | 5 | 16 | 27 |
| 4 | ວິທະຍາໄລຄູປາກເຊ | 6 | 7 | 45 | 58 |
| **ລວມ** | | **25** | **17** | **137** | **179** |

*3.2 ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນແບບສອບຖາມແລະແບບສໍາພາດເຊິ່ງແຕ່ລະແບບມີລາຍລະອຽດດັ່ງນີ້: ແບບສອບຖາມແບ່ງອອກເປັນ 3ພາກສ່ວນຄື: 1)ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມເປັນລັກສະນະກວດກາລາຍການ (Check List), 2) ແມ່ນຂໍ້ມູນກ່ຽວກັບສະພາບໃນການຈັດການຮຽນ-ການສອນ,ບັນຫາໃນການຈັດການຮຽນ-ການສອນແລະແນວທາງໃນການພັດທະນາຫຼັກສູດແລະການຈັດການຮຽນ-ການສອນຢູ່ຫ້ອງຮຽນແລະການສອນແບບອອນລາຍໃຫ້ຄຽງຄູ່ກັນໄປ. ຜູ້ຕອບແບບສອບຖາມຈະໄດ້ໝາຍເອົາຄໍາຕອບທີ່ເຫັນວ່າກົງກັບຄວາມຄິດຂອງຕົນຕາມ 5 ລະດັບ (Likert scale ຈາກ “ເຫັນດີທີ່ສຸດ” ຈົນເຖິງ “ບໍ່ເຫັນດີທີ່ສຸດ”) ແລະ 3) ແມ່ນຄໍາຖາມປາຍເປີດຖາມເຖິງແນວທາງໃນການພັດທະນາຫຼັກສູດແລະການຈັດການຮຽນ-ການສອນຢູ່ຫ້ອງຮຽນ ແລະ ການສອນແບບອອນລາຍ.

ແບບສໍາພາດຜູ້ບໍລິຫານການສຶກສາໃນແຕ່ລະແຫ່ງເປັນລັກສະນະຮູບແບບເຄິ່ງໂຄງສ້າງ (Semi-structured interview) ທີ່ມີຮ່າງສໍາພາດ ແລະ ຄໍາຖາມຫຼັກເປັນພື້ນຖານ ແຕ່ສາມາດຖາມຂໍ້ມູນຕ່າງໆທີ່ມີລັກສະນະສະເພາະເຈາະຈົງທີ່ກ່ຽວຂ້ອງກັບຄໍາຖາມຫຼັກໄດ້. ແບບສໍາພາດແບ່ງເປັນ 2 ພາກຄື: 1)ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບສໍາພາດເປັນລັກສະນະກວດກາລາຍການ (Check List), 2) ແມ່ນຂໍ້ມູນກ່ຽວກັບສະພາບ, ບັນຫາໃນການຈັດການຮຽນ-ການສອນ ແລະ ແນວທາງໃນການພັດທະນາຫຼັກສູດ ແລະ ການຈັດການຮຽນ-ການສອນຢູ່ຫ້ອງຮຽນ ແລະ ການສອນແບບອອນລາຍໃຫ້ຄຽງຄູ່ກັນໄປ.

*3.3 ວິທີເກັບກໍາຂໍ້ມູນ*

ທີມຄົ້ນຄວ້າໄດ້ມີຂັ້ນຕອນດັ່ງນີ້: 1)ຂໍໜັງສືພົວພັນວຽກຈາກຄະນະບໍດີຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ; 2) ນໍາເອົາໜັງສືພົວພັນວຽກໄປພົວພັນກັບພາກສ່ວນທີ່ກ່ຽວຂ້ອງໂດຍສະເພາະແມ່ນສະຖາບັນການສຶກສາຄູທີ່ເປັນກຸ່ມເປົ້າໝາຍໃນການຄົ້ນຄວ້າ; 3) ທີມຄົ້ນຄວ້າລົງໄປພົບພັນກຸ່ມເປົ້າໝາຍ ເພື່ອຊີ້ແຈງຈຸດປະສົງແລະເກັບກໍາຂໍ້ມູນຈິງ.

*3.4 ການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື*

ດໍາເນີນຕາມຂັ້ນຕອນດັ່ງນີ້:1)ສຶກສາຄົ້ນຄວ້າທິດສະດີ, ຫຼັກການ, ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ,2) ສ້າງແບບສອບຖາມ ໃຫ້ຄອບຄຸມຕາມຈຸດປະສົງທີ່ຕັ້ງໄວ້, 3) ໃຫ້ຜູ້ຊ່ຽວຊານຈໍານວນ3ທ່ານ ພິຈາລະນາຄວາມຊັດເຈນຂອງຄໍາຖາມ, ສິ່ງທີ່ຄວນປັບປຸງ ແລະ ໄດ້ຄ່າດັດຊະນີຄວາມສອດຄ່ອງ IOCເທົ່າ

ກັບ 1;4)ນຳແບບສອບຖາມໄປທົດລອງໃຊ້ (Try out) ຄູສອນຈຳນວນ 30ຄົນ ໃນຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ; 5)ເອົາຂໍ້ມູນຈາກການທົດລອງມາວິເຄາະຫາຄ່າຄວາມເຊື່ອໝັ້ນ (Reliability) ໂດຍໃຊ້ຄ່າສຳປະສິດອານຟາ (Alpha-Coefficient) ຕາມວິທີການຂອງ Cronbach) ແລະ 6) ປັບປຸງແກ້ໄຂແບບສອບຖາມ ແລະ ຈັດພິມສະບັບສົມບູນແລ້ວນຳໄປເກັບຂໍ້ມູນນຳກຸ່ມເປົ້າໝາຍ ຈຳນວນທັງໝົດ 179 ຄົນ.

*4.4 ວິທີການວິເຄາະຂໍ້ມູນ*

ການວິເຄາະຂໍ້ມູນແບບສອບຖາມຈະຖືກວິເຄາະ ໂດຍໃຊ້ໂປຣແກຼມວິເຄາະຂໍ້ມູນສຳເລັດຮູບ ໂດຍການຊອກຫາຄ່າຄວາມຖີ່ຂອງຂໍ້ມູນ (Frequency),ຄ່າສ່ວນຮ້ອຍ(Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (S.D) ສ່ວນຂໍ້ມູນແບບສຳພາດໄດ້ວິເຄາະການຂຽນແບບຈັດໝວດໝູ່ ແລະ ລຽງຄຳເວົ້າ.

## 4. ຜົນການຄົ້ນຄວ້າ

ຜົນການປະເມີນລະດັບຄວາມຄິດເຫັນໃນການປະຕິບັດຫຼັກສູດຂອງສາຍຄູວິທະຍາສາດສັງຄົມໃນສະຖານການສຶກສາຄູສປປລາວໃນໄລຍະCOVID-19.ຕາມຄຳຄິດເຫັນຂອງກຸ່ມເປົ້າໝາຍພົບວ່າ: ຄູອາຈານຫຼາຍຄົນກໍໄດ້ປະຕິບັດການຮຽນ-ການສອນໄປຕາມຂະບວນການ. ມີການຈັດຝຶກອົບຮົມວິທີສອນໃຫ້ກັບອາຈານທີ່ບໍ່ທັນຊິນເຄີຍໃນການສອນແບບອອນລາຍ. ນອກຈາກນັ້ນກໍໄດ້ມີການປະຕິບັດການຈັດຝຶກອົບຮົມການຮຽນ-ການສອນແບບອອນລາຍໃຫ້ກັບຄູສອນໃນມະຫາວິທະຍາໄລແຫ່ງຊາດເຊິ່ງຈັດໄດ້ ຈຳນວນ 500 ເທື່ອຄົນ. ແນວໃດກໍຕາມກໍຍັງມີສະພາບບັນຫາຫຼາຍຢ່າງເກີດຂຶ້ນໃນເວລາປະຕິບັດການຮຽນການສອນເຊັ່ນ: ບັນຫາອິນເຕີເນັດຊ້າ, ນັກສຶກສາເຂົ້າມາຮຽນພຽງ 1 ສ່ວນ 3 ຂອງນັກສຶກສາທັງໝົດ ແລະ ອາຈານຜູ້ທີ່ເກັ່ງ (IT) ແມ່ນໄດ້ຈັດການຮຽນ-ການສອນປົກກະຕິແຕ່ກໍພົບບັນຫາເປັນຕົ້ນວ່ານັກສຶກສາກໍເຂົ້າມາຮຽນປະມານ 2 ສ່ວນ 3 ແລະ ຜູ້ທີ່ເຂົ້າມາຮຽນນັ້ນບໍ່ເອົາໃຈໃສ່ໃນການຮຽນປານໃດ. ເຂົາເຈົ້າເຂົ້າມາຮຽນພໍໃຫ້ໝົດເວລາ, ບາງຄົນກໍເປີດຄອມປະໄວ້ແລ້ວໄປເຮັດແນວອື່ນ, ບາງຄົນກໍນັ່ງຊື່ໆບໍ່ມີການຖາມ ແລະ ຕອບຫຍັງເລີຍ, ການແຕ່ງກາຍກໍບໍ່ສຸພາບແລ້ວແຕ່ຈະນຸ່ງ, ບ່າງຄົນກໍນອນເບິ່ງ ແລະ ອື່ນໆ ເຊິ່ງເຮັດໃຫ້ຜົນການຮຽນມີຄຸນນະພາບພຽງແຕ່ 30-50% ເທົ່ານັ້ນ.

ເພື່ອເປັນແນວທາງເຮັດໃຫ້ການຮຽນການສອນດີຂຶ້ນຜົນການຄົ້ນຄວ້າຍັງພົບວ່າ ດ້ານຫຼັກສູດຄວນຈະປັບຫຼັກສູດໃຫ້ສອນຄຽງຄູ່ກັນໄປເພື່ອເປັນຄວາມຊິນເຄີຍໃຫ້ກັບຄູຜູ້ສອນ ແລະ ນັກສຶກສາ. ຄວນຈັດການຮຽນ-ການສອນໃນຫ້ອງຮຽນ 60% ແລະ ແບບອອນລາຍ 40%. (2) ດ້ານຄູສອນ ແລະ ນັກສຶກສາ: ຄູຄວນຈະສຶກສາຮຽນຮູ້ກ່ຽວກັບການສອນແບບອອນລາຍໃຫ້ຊຳນານທີ່ສຸດຕື່ມ.

## 5. ອະພິປາຍຜົນ

1) ສະພາບໃນການຈັດການຮຽນ-ການສອນ: ອາຈານຫຼາຍຄົນກໍໄດ້ປະຕິບັດການຮຽນ-ການສອນໄປຕາມຂະບວນການ. ໃນນັ້ນແຕ່ລະວິທະຍາໄລຄູ ແລະ ມະຫາວິທະຍາໄລກໍໄດ້ມີການຈັດຝຶກອົບຮົມວິທີສອນໃຫ້ກັບອາຈານທີ່ບໍ່ທັນຊິນເຄີຍໃນການສອນແບບອອນລາຍ ແລະ ມະຫາວິທະຍາໄລແຫ່ງຊາດໄດ້ຮັບທຶນຈາກ ADB ຫຼັງຈາກນັ້ນກໍໄດ້ມີການປະຕິບັດການຈັດຝຶກອົບຮົມການຮຽນ-ການສອນແບບອອນລາຍໃຫ້ກັບຄູສອນໃນມະຫາວິທະຍາໄລແຫ່ງຊາດໄດ້ ຈຳນວນ 500 ເທື່ອຄົນ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າ ຂອງຄຳໄມ ສີວົງໄຊ (2021) ໄດ້ຄົ້ນຄວ້າເລື່ອງ "ຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ຕໍ່ກັບການຈັດການຮຽນ-ການສອນຂອງຄູສອນໃນ ວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ"ການຄົ້ນຄວ້າ ພົບວ່າ: ຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ຕໍ່ກັບການຈັດການຮຽນ-ການສອນຂອງຄູສອນ ໃນ 3 ດ້ານ ຄື: ການກະກຽມວາງແຜນການສອນ, ການຈັດຕັ້ງປະຕິບັດການສອນ ແລະ ການວັດ-ປະເມີນຜົນການສອນ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍ ແລະ ວິທີການຈັດຕັ້ງປະຕິບັດການຮຽນ-ການສອນໃນໄລຍະທີ່ມີການແຜ່ລະບາດພະຍາດໂຄວິດ-19 ເຫັນວ່າລະບົບເອເລັກໂຕຼນິກທີ່ຄູສອນນຳໃຊ້ເຂົ້າໃນການຈັດການຮຽນ-ການສອນ ແມ່ນໂປຼແກຣມ Google meet ຖືກນຳໃຊ້ຫຼາຍກວ່າໝູ່;

2) ບັນຫາໃນການຈັດການຮຽນ-ການສອນ: ພົບບັນຫາອິນເຕີເນັດຊ້າ, ນັກສຶກສາເຂົ້າມາຮຽນພຽງ 1 ສ່ວນ 3 ຂອງນັກສຶກສາທັງໝົດແລະອາຈານຜູ້ທີ່ເກັ່ງ (IT) ແມ່ນໄດ້ຈັດການຮຽນ-ການສອນປົກກະຕິແຕ່ກໍພົບບັນຫາເປັນຕົ້ນວ່ານັກສຶກສາກໍເຂົ້າມາຮຽນປະມານ 2 ສ່ວນ 3 ແລະ ຜູ້ທີ່ເຂົ້າມາຮຽນນັ້ນບໍ່ເອົາໃຈໃສ່ໃນການຮຽນປານໃດເຂົ້າມາຮຽນພໍໃຫ້ມົດເວລາບາງຄົນກໍເປີດຄອມປະໄວ້ແລ້ວໄປເຮັດແນວອື່ນ, ບາງຄົນກໍນັ່ງຊື່ໆບໍ່ມີການຖາມແລະຕອບຫຍັງເລີຍ, ການແຕ່ງກາຍກໍບໍ່ສຸພາບແລ້ວແຕ່ຈະນຸ່ງ, ບ່າງຄົນກໍນອນເບິ່ງ ແລະ ອື່ນໆ ເຊິ່ງເຮັດໃຫ້ຜົນການຮຽນມີຄຸນນະພາບພຽງແຕ່ 30-50% ເທົ່ານັ້ນ. ກໍສອດຄ່ອງກັບທິດຊີ້ນຳຂອງມະຫາວິທະຍາໄລແຫ່ງຊາດ(ເລກທີ1332/ມຊວັນທີ21ມິຖຸນາ 2021) ວ່າດ້ວຍການຈັດການຮຽນ-ການສອນແບບອອນລາຍອາດຈະເກີດມີບັນຫາຕາມມາເຊັ່ນ: ຄູບໍ່ສາມາດນຳໃຊ້ IT ເຂົ້າໃນການ

ສອນໄດ້ດີທຸກຄົນເພາະພວກເຮົາບໍ່ໄດ້ຈັດຝຶກອົບຮົມເລື່ອງນີ້ແບບຕໍ່ເນື່ອງແລະທົ່ວເຖິງພ້ອມທັງເປັນບັນຫາໃໝ່ທີ່ຄູພວກເຮົາຫຼາຍຄົນບໍ່ໄດ້ມີການກະກຽມໄວ້ລ່ວງໜ້າແຕ່ພວກເຮົາກໍພະຍາຍາມໃຫ້ທຸກຄົນໄດ້ມີສະຕິ ແລະ ເອົາໃຈໃສ່ສອນນັກສຶກສາຂອງພວກເຮົາໃຫ້ໄດ້ຮັບຄວາມຮູ້ຫຼາຍເທົ່າທີ່ຈະເຮັດໄດ້.

3) ແນວທາງໃນການພັດທະນາຫຼັກສູດແລະການຈັດການຮຽນ-ການສອນ: (1) ດ້ານຫຼັກສູດຄວນຈະປັບຫຼັກສູດໃຫ້ສອນຄຽງຄູ່ກັນໄປເພື່ອເປັນຄວາມຊິນເຄີຍໃຫ້ກັບຄູຜູ້ສອນແລະນັກສຶກສາ. ຄວນຈັດການຮຽນ-ການສອນໃນຫ້ອງຮຽນ 60% ແລະ ແບບອອນລາຍ 40%. (2) ດ້ານຄູສອນແລະນັກສຶກສາ: ຄູຄວນຈະສຶກສາຮຽນຮູ້ກ່ຽວກັບການສອນແບບອອນລາຍໃຫ້ສຳນານທີ່ສຸດ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າ ຂອງເຕີ້ຍ ວົງດາລາ (2021) ໄດ້ເຮັດການຄົ້ນຄວ້າການສຳຫຼວດຄວາມພ້ອມຂອງຄູ-ອາຈານ ຕໍ່ກັບການຈັດການຮຽນ-ການສອນອອນລາຍ ໃນວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ ໂດຍມີຈຸດປະສົງ ເພື່ອສຳຫຼວດຄວາມພ້ອມ ແລະ ຄວາມຕ້ອງການ ສິ່ງສະໜັບສະໜູນຂອງຄູໃນການສົ່ງເສີມຂະບວນດ້ານຈັດການຮຽນ-ການສອນອອນລາຍໃຫ້ມີປະສິດທິພາບ.

## 6. ສະຫຼຸບຜົນ

1) ສະພາບໃນການຈັດການຮຽນ- ການສອນໃນໄລຍະພະຍາດ COVID-19 ລະບາດຮອບທີ 1ໄປທົ່ວໂລກ ແລະ ສປປ ລາວ ກໍໄດ້ມີການປັບປ່ຽນການສອນມາເປັນແບບອອນ (Online) ເຫັນວ່າ ອາຈານຫຼາຍຄົນກໍໄດ້ປະຕິບັດການຮຽນ-ການສອນໄປຕາມຂະບວນການ. ໃນນັ້ນແຕ່ລະວິທະຍາໄລຄູ ແລະ ມະຫາວິທະຍາໄລ ກໍໄດ້ມີການຈັດຝຶກອົບຮົມວິທີສອນໃຫ້ກັບອາຈານທີ່ບໍ່ທັນຊິນເຄີຍໃນການສອນແບບອອນລາຍ. ພ້ອມກັນນັ້ນ ກະຊວງສຶກສາທິການ ແລະ ກິລາ ກໍໄດ້ແຈ້ງການໃຫ້ມີການຈັດການຮຽນ-ການສອນ ແບບອອນລາຍ. ແຕ່ການຈັດການຮຽນການສອນກໍມີຫຼາຍບັນຫາເກີດຂຶ້ນບໍ່ວ່າຈະເປັນດ້ານອິນເຕີເນັດຊ້າ, ຄວາມເອົາໃຈໃສ່ຂອງນັກສຶກສາ ແລະ ການມີສ່ວນຮ່ວມໃນເວລາຮຽນອອນລາຍ. ເພື່ອເຮັດໃຫ້ຄຸນະພາບການຮຽນການສອນດີຂຶ້ນກ່າເກົ່າ ການປັບປຸງຫຼັກສູດຈຶ່ງມີຄວາມຈຳເປັນດ້ອຍການປັບເປັນຫຼັກສູດຮຽນທາງໄກ. ປັບປຸງໃຫ້ມີການສອນຄຽງຄູ່ກັນໄປ Offline and Online ແລ້ວຄ່ອຍເພີ່ມການສອນທາງໄກຫຼາຍຂຶ້ນເລື້ອຍໆ. ໃນນັ້ນ, ຄູຄວນຈະສຶກສາຮຽນຮູ້ກ່ຽວກັບການສອນແບບອອນລາຍໃຫ້ມີຄວາມຊຳນານ, ປັບເນື້ອໃນບົດຮຽນໃຫ້ກະທັດຮັດ ແລະ ເຂົ້າໃຈງ່າຍ, ສ້າງຮູບພາບປະກອບເພື່ອເປັນການຊື່ສານໃຫ້ເຂົ້າໃຈງ່າຍ ແລະ ຕັດຕໍ່ວີດີໂອປະກອບນຳ. ລະບຽບການຮຽນ-ການສອນແບບອອນລາຍກໍຕ້ອງປະຕິບັດໃຫ້ເຄັ່ງຄັດທຸກຂັ້ນຕອນຄືກັນກັບການສອນໃນຫ້ອງ.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

1) ດ້ານການເກັບຂໍ້ມູນ: ໄລຍະການໄປເກັບຂໍ້ມູນເຫັນວ່າມີອຸປະສັກຫຼາຍ ເພາະວ່າເປັນໄລຍະໂລກລະບາດພະຍາດໂຄວິດ 19 ທາກໍ່ຢຸດຕິລົງ ແຕ່ກໍຍັງມີການຕັ້ງດ່ານກວດບັດສັກຢາຄົບ 2 ເຂັມ ລະຫວ່າງ ແຂວງ ກັບ ແຂວງ. ບຽບຂັ້ນຕອນກອນສອນອອນລາຍໃຫ້ຄືກັບການສອນຢູ່ຫ້ອງຮຽນ.

2) ຜູ້ໃຫ້ຂໍ້ມູນ: ເປົ້າໝາຍຜູ້ໃຫ້ຂໍ້ມູນແມ່ນມາບໍ່ຖືກຕາມເຫງື່ອນໄຂທີ່ເຮົາຕັ້ງໄວ້ ໄດ້ປ່ຽນຜູ້ທີ່ຕຳແໜ່ງຮອງ ມາໃຫ້ຂໍ້ມູນແທນ ເພາະວ່າ ຜູ້ທີ່ຢູ່ໃນເປົ້າໝາຍແມ່ນຍັງບໍ່ເຂົ້າມາປະຈຳການ ຍັງຢູ່ໄຮ່ ແລະ ຢູ່ນາ.

3) ການໃຫ້ຂໍ້ມູນ: ບາງໂຮງຮຽນ ແລະ ບາງຄົນ ຍັງບໍ່ໃຫ້ຂໍ້ມູນຊັດເຈນຕໍ່ການສອນໃນໄລຍະນັ້ນ ເພາະວ່າສວຍໂອກາດພັກໄປເຮັດວຽກອື່ນ ໂດຍບໍ່ໄດ້ມາສອນເລີຍ.

## 8. ຂໍ້ສະເໜີແນະ

ໃນການຄົ້ນຄວ້າຄັ້ງຕໍ່ໄປຢາກໃຫ້ປະເມີນລະດັບຄວາມຄິດເຫັນໃນການປະຕິບັດຫຼັກສູດຂອງສາຍຄູສາຂາອື່ນໆຕື່ມໃນສະຖານການສຶກສາຄູ ສປປ ລາວ.

ການສອນແບບອອນລາຍຄວນຈະຈັດຫ້ອງສະເພາະໃຫ້ກັບຄູຜູ້ສອນ ບໍ່ໃຫ້ມີສຽງລົບກວນໃນເວລາຕັດຕໍ່ວີດີໂອ ແລະ ເວລາສອນ, ສັນຍານອິນເຕີເນັດຕ້ອງໄວ ແລະ ໃຊ້ຟຼີ, ຊອກຫາໂປຼແກມທີ່ທັນສະໄໝ ແລະ ມີເນື້ອທີ່ຮອງຮັບຈຳນວນນັກສຶກສາໃຫ້ພຽງພໍ ແລະ ຜູ້ບໍລິຫານຄວນຈະເຫັນຄວາມສຳຄັນ ແລະ ອຳນວຍຄວາມສະດວກໃຫ້ທັນກັບສະພາບການປ່ຽນແປງຕະຫຼອດເວລາພ້ອມທັງມີການຕິດຕາມ ແລະ ປະເມີນຜົນເປັນແຕລະເດືອນ ແລະ ພາກຮຽນ.

## 9. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. **(2015).** *ວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ແລະ ຍຸດທະສາດ ປີ **2021-** 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 (2016 – 2020).* ນະຄອນຫຼວງວຽງຈັນ :

ສຸວິມົນ ວ່ອງວາໜິດ. (2018). *ການວິໄຈປະເມີນຄວາມຕ້ອງການຈຳເປັນ.*.(ສະບັບປັບປຸງ) ກຸງເທບ: ສຳນັກພິມແຫ່ງຈຸລາລົງກອນ. ຄົ້ນພົບວັນທີ 06 ກັນຍາ 2024 ຈາກ https://www.car.chula.ac.th/display7.php?bib=b2283213

ທິດສະນາ ແຂມມະນີ. (2018). *ອົງຄວາມຮູ້ເພື່ອການຈັດຂະບວນການຮຽນຮູ້ທີ່ມີປະສິດທິພາບ.* ກຸງເທບ: ສຳນັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ. ຄົ້ນພົບວັນທີ 06 ກັນຍາ 2024 ຈາກ https://www.car.chula.ac.th/display7.php?bib=b1805691

ເຕີ້ຍ ວົງດາລາ (2020-2021) ການສຳຫຼວດຄວາມພ້ອມຂອງຄູ-ອາຈານ ຕໍ່ກັບການຈັດການຮຽນ-ການສອນ ພາຍໃນວິທະຍາໄລຄູດົງຄຳຊ້າງ. ບົດຄົ້ນຄວ້າວິທະຍາສາດ ວິທະຍາໄລຄູດົງຄຳຊ້າງ;

ຄຳໄມ ສີວົງໄຊ (2022) ຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ຕໍ່ກັບການຈັດການຮຽນ-ການສອນຂອງຄູສອນໃນວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ. ວິທະຍານິພົນລະດັບປະລິນຍາໂທ ສຶກສາສາດສາຂາ ການສຶກສາພັດທະນາທ້ອງຖິ່ນ ມະຫາວິທະຍາໄລແຫ່ງຊາດ;

ຊະວິດ ລາຫຸນ (2551) ການສຶກສາກິດຈະກຳສິລະປະໃນລະບົບອອນລາຍ ທີ່ສົ່ງເສີມຈາລິຍະທຳວິຊາການ ຂອງນັກສຶກສາລະດັບປະລິນຍາຕີໃນກຸງເທບມະຫານະຄອນ. ວິທະຍານິພົນການສຶກສາຕາມຫຼັກສູດປະລິນຍາຄະລຸສາດມະຫາບັນດິດ ສາຂາສິລະປະສຶກສາ ພາກວິຊາສິລະປະ ດົນຕີ ແລະ ນາຕະສິນສຶກສາ ຄະນະຄະລຸສາດ ຈຸລາລົງກອນມະຫາວິທະຍາໄລ;

Asai. K. (2013). An Investigation of Students Cognitive and Metacognitive Processes During Their Period Doing Learning Activities Using on Constructivist Theory Emphasizing Metacognitive Processes and The Geometer's Sketchpad as a Learning tool on Pythagorus Theory for Matthayomsuksa 2 students. *Journal of Education Khon Kaen University (EDKKUJ), 13*(1), 26-32.

Asai, K., Kuroda, A., & Aerarunchot, S. (2024). Development of a training course to enhance the morality and ethics of student teachers at Champasack University, Lao People's Democratic Republic. *Humanities, Arts and Social Sciences Studies*, *24*(2), 303–312.